ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------000---------------

ກະຊວງສຶກສາທິການ ແລະ ກິລາ

ເລກທີ.........../ສສກ.ມຍ

ນະຄອນຫຼວງວຽງຈັນ, ວັນທີ...........

# ຂໍ້ຕົກລົງຂອງລັດຖະມົນຕີ
# ວ່າດ້ວຍການຄຸ້ມຄອງໂຮງຮຽນເອກະຊົນນານາຊາດ
# ຂອງການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາແຫ່ງ ສ ປປ ລາວ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 18 ກໍລະກົດ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;
- ອີງຕາມ ການສະເໜີຂອງກົມມັດທະຍົມສຶກສາ ແລະ ການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ຈິ່ງຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດລະບຽບກ່ຽວກັບການຄຸ້ມຄອງ, ການສ້າງຕັ້ງ ແລະ ຍຸບເລີກ, ການຂໍຕໍ່ໃບອະນຸມັດ, ການນຳໃຊ້ຫຼັກສູດ, ການຈັດການຮຽນ-ການສອນ ຂອງໂຮງຮຽນເອກະຊົນນານາຊາດເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານຕ່າງໆ ໃຫ້ມີປະສິດທິຜົນ, ສອດຄ່ອງກັບກົດໝາຍວ່າດ້ວຍການສຶກສາ ແລະ ລະບຽບການຕ່າງໆຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2. ຫຼັກການຄຸ້ມຄອງ**

ໂຮງຮຽນເອກະຊົນນານາຊາດ ມີຫຼັກການຄຸ້ມຄອງ ດັ່ງນີ້:

1. ເປັນສະຖານທີ່ຈັດຕັ້ງການຮຽນ-ການສອນ ທີ່ນຳໃຊ້ຫຼັກສູດນານາຊາດ ແລະ ປະສົມປະສານກັບຫຼັກສູດແຫ່ງຊາດ;
2. ເປັນສະຖານທີ່ຮັບເອົາເດັກກ່ອນໄວຮຽນ, ນັກຮຽນຊັ້ນປະຖົມ ແລະ ມັດທະຍົມສຶກສາ;
3. ໂຮງຮຽນເອກະຊົນນານາຊາດທຸກແຫ່ງ ຕ້ອງມີການຈັດຕັ້ງສະພາໂຮງຮຽນ.

4. ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄຸ້ມຄອງໂຮງຮຽນນານາຊາດ.

ມາດຕາ 3. ອະທິບາຍຄຳສັບ

1. ໂຮງຮຽນເອກະຊົນນານາຊາດ ໝາຍເຖິງ ສະຖານການສຶກສາເອກະຊົນ ທີ່ບຸກຄົນ, ນິຕິບຸກຄົນ ສ້າງຕັ້ງຂຶ້ນ ເພື່ອດຳເນີນການຮຽນ-ການສອນ ການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ. ໃນລະບົບທີ່ຮັບເອົານັກຮຽນໂດຍບໍ່ຈຳແນກ ເຊື້ອຊາດ, ສັນຊາດ, ສາສະໜາ ທີ່ບໍ່ຂັດຕໍ່ສິລະທຳ, ຄວາມໝັ້ນຄົງ ແລະ ກົດໝາຍຂອງ ສປປ ລາວ.
2. ຫຼັກສູດນານາຊາດ ໝາຍເຖິງຫຼັກສູດຂອງປະເທດໃດໜຶ່ງ ຊຶ່ງເປັນທີ່ຍອມຮັບຈາກສາກົນ.

ມາດຕາ 4. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ຂອງໂຮງຮຽນເອກະຊົນນານາຊາດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ການສ້າງຕັ້ງໂຮງຮຽນ

ມາດຕາ 5. ເງື່ອນໄຂດ້ານທີ່ດິນ ແລະ ທີ່ຕັ້ງ

ເງື່ອນໄຂດ້ານທີ່ດິນ ແລະ ທີ່ຕັ້ງຂອງການສ້າງຕັ້ງໂຮງຮຽນເອກະຊົນນານາຊາດ ມີດັ່ງນີ້:

1. ທີ່ດິນທີ່ໃຊ້ສ້າງຕັ້ງໂຮງຮຽນ ຕ້ອງເປັນກຳມະສິດຂອງຜູ້ປະກອບການ;
2. ຖ້າເປັນທີ່ດິນເຊົ່າ ຕ້ອງມີສັນຍາເຊົ່າຢ່າງຕ່ຳ 10 ປີ ສຳລັບການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ແລະ 15 ປີ ສຳລັບມັດທະຍົມສຶກສາ;
3. ຖ້າເປັນທີ່ດິນຈຳນອງ ຕ້ອງເປັນການຈຳນອງ ເພື່ອການດຳເນີນການສ້າງຕັ້ງໂຮງຮຽນເທົ່ານັ້ນ;
4. ຕ້ອງມີພື້ນທີ່ສີຂຽວ ຈຳນວນ 1 ໃນ 3 ຂອງເນື້ອທີ່ທັງໝົດ;
5. ມີພື້ນທີ່ໃນຮົ່ມ ຫຼື ກາງແຈ້ງສຳລັບກິດຈະກຳທີ່ສະໜັບສະໜູນການຮຽນ - ການສອນ ແລະ ອະເນກປະສົງ ບໍ່ຕ່ຳກວ່າ 1 ສ່ວນ 3 ຂອງເຂດພື້ນທີ່ຊົມໃຊ້ທັງໝົດ;
6. ຖ້າສ້າງຕັ້ງໂຮງຮຽນໃໝ່ຕ້ອງແມ່ນສະຖານທີ່ຢູ່ນອກເມືອງທີ່ບໍ່ກີດຂວາງສະພາບການຈາລະຈອນ;
7. ເງື່ອນໄຂດ້ານອື່ນໆ ໃຫ້ປະຕິບັດຕາມລະບຽບການຄຸ້ມຄອງໂຮງຮຽນແຕ່ລະຂັ້ນ.

ມາດຕາ 6. ມາດຕະຖານດ້ານອາຄານ ແລະ ສະຖານທີ່

ມາດຕະຖານດ້ານອາຄານ ແລະ ສະຖານທີ່ ມີດັ່ງນີ້:

1. ສະຖານການສຶກສາກ່ອນໄວຮຽນ (ລ້ຽງເດັກ ແລະ ອະນຸບານສຶກສາ)
   1) ສະຖານທີ່ຕ້ອງຕັ້ງຢູ່ຈຸດດຽວ ມີສະພາບແວດລ້ອມທີ່ດີ, ມີຄວາມປອດໄພ ແລະ ບໍ່ມີຄວາມສ່ຽງຕໍ່ໄພພິບັດຕ່າງໆ ມີເນື້ອທີ່ສະເລ່ຍ 25 - 35 ຕາແມັດ/ຄົນ;
   2) ມີອາຄານຮຽນ, ຫ້ອງການຂອງໂຮງຮຽນ, ຫ້ອງອຳນວຍການ, ຫ້ອງບໍລິຫານ, ຫ້ອງນອນສຳລັບເດັກ, ຫ້ອງແພດ, ຫ້ອງເດັກຫຼິ້ນ, ຫ້ອງຍາມ, ຫ້ອງພັກຄູ-ພະນັກງານ, ຫ້ອງອາ

ຫານ, ຫ້ອງປະຕິບັດກິດຈະກຳຕ່າງໆທີ່ເໝາະສົມ, ໂຕະຕັ່ງ, ເຄື່ອງໃຊ້, ຫ້ອງເກັບມ້ຽນອຸປະກອນຮັບໃຊ້ສຳລັບການລ້ຽງດູ ແລະ ສິດສອນເດັກ;

3) ມີໄຟຟ້າ, ນ້ຳສະອາດ, ລະບົບລະບາຍນ້ຳ, ຫ້ອງນ້ຳທີ່ສະອາດ ແລະ ເໝາະສົມກັບສົ່າອາຍຸເດັກ;

4) ມີເດີ່ນຫຼິ້ນ, ເຄື່ອງຫຼິ້ນໃນເດີ່ນ, ມີກຳແພງອ້ອມຮອບ, ມີປະຕູໂຂງ, ເສົາທຸງຊາດລາວ, ປ້າຍໂຮງຮຽນ ແລະ ປ້າຍຫ້ອງຮຽນ;

5) ມີອຸປະກອນການຮຽນ-ການສອນ, ເຄື່ອງຫຼິ້ນ ແລະ ເຄື່ອງໃຊ້ທີ່ຮັບປະກັນຄວາມປອດໄພສຳລັບເດັກ.

2. **ສະຖານການສຶກສາຊັ້ນປະຖົມສຶກສາ ແລະ ຊັ້ນມັດທະຍົມສຶກສາ**

1) ສະຖານທີ່ມີສະພາບແວດລ້ອມທີ່ດີ, ມີຄວາມປອດໄພ ແລະ ບໍ່ມີຄວາມສ່ຽງຕໍ່ໄພພິບັດຕ່າງໆ ມີເນື້ອທີ່ສະເລ່ຍ 30-40 ຕາແມັດ/ຄົນ;

2) ມີສະໂມສອນໃນຮົ່ມ, ເດີ່ນກິລາ, ບ່ອນຈອດລົດທີ່ເໝາະສົມ, ກຳແພງ, ປະຕູໂຂງ, ປ້າຍໂຮງຮຽນ ແລະ ປ້າຍຫ້ອງຮຽນ;

3) ມີໄຟຟ້າ, ນ້ຳສະອາດ, ຫ້ອງນ້ຳແຍກຍິງ-ຊາຍ, ອ່າງລ້າງມື ແລະ ຫ້ອງອາບນ້ຳ;

4) ມີຫ້ອງຄະນະອຳນວຍການ, ຫ້ອງພັກຄູ, ຫ້ອງຮຽນ, ຫ້ອງສະໝຸດ, ຫ້ອງສິລະປະກຳ, ຫ້ອງສິລະປະດົນຕີ, ຫ້ອງຄອມພິວເຕີ້, ຫ້ອງຝຶກປະຕິບັດ, ຫ້ອງແນະແນວ, ຫ້ອງຟັງສຽງພາສາຫ້ອງແພດ, ຫ້ອງອາຫານ ແລະ ຫ້ອງຍາມ;

5) ມີຫ້ອງເກັບມ້ຽນສື່-ອຸປະກອນການຮຽນ-ການສອນ, ອຸປະກອນກິລາ ແລະ ສິລະປະ.

3. **ສະຖານການສຶກສາຊັ້ນ ຊັ້ນມັດທະຍົມສຶກສາ**

1) ມີສະພາບແວດລ້ອມທີ່ດີ, ມີຄວາມປອດໄພ ແລະ ບໍ່ມີຄວາມສ່ຽງຕໍ່ໄພພິບັດຕ່າງໆ, ມີເນື້ອທີ່ສະເລ່ຍ 30-40 ຕາແມັດ/ຄົນ;

2) ມີສະໂມສອນໃນຮົ່ມ, ເດີ່ນກິລາ, ບ່ອນຈອດລົດທີ່ເໝາະສົມ, ກຳແພງ, ປະຕູໂຂງ, ປ້າຍໂຮງຮຽນ ແລະ ປ້າຍຫ້ອງຮຽນ ;

3) ມີໄຟຟ້າ, ນ້ຳສະອາດ, ລະບົບລະບາຍນ້ຳ, ຫ້ອງນ້ຳແຍກຍິງ-ຊາຍ, ອ່າງລ້າງມື ແລະ ຫ້ອງອາບນ້ຳ;

4) ມີຫ້ອງຄະນະອຳນວຍການ, ຫ້ອງພັກຄູ, ຫ້ອງປະຊຸມ, ຫ້ອງຮຽນ, ຫ້ອງສະໝຸດ, ຫ້ອງສິລະປະກຳ, ຫ້ອງສິລະປະດົນຕີ, ຫ້ອງຄອມພິວເຕີ້, ຫ້ອງທົດລອງ, ຫ້ອງແນະແນວ, ຫ້ອງຟັງສຽງພາສາ, ຫ້ອງແພດ, ຫ້ອງອາຫານ ແລະ ຫ້ອງຍາມ;

5) ມີຫ້ອງເກັບມ້ຽນສື່-ອຸປະກອນການຮຽນ-ການສອນ, ອຸປະກອນກິລາ ແລະ ສິລະປະ.

4. ສະຖານການສຶກສາທຸກຊັ້ນຮຽນຕ້ອງສ້າງເງື່ອນໄຂ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ພິການສາມາດຮຽນຮ່ວມໄດ້.

ມາດຕາ 7. ການອອກແບບອາຄານ

ອາຄານຮຽນ ແລະ ອາຄານປະກອບຕ່າງໆ ຕ້ອງໄດ້ມາດຕະຖານທີ່ກຳນົດໄວ້ ດັ່ງນີ້ :

1. ອາຄານຮຽນ ສຳລັບການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາ ສູງບໍ່ເກີນ 2 ຊັ້ນ;
2. ອາຄານຮຽນ ສຳລັບມັດທະຍົມສຶກສາ ຖ້າສູງເກີນ 3 ຊັ້ນ ຕ້ອງມີລິຟ, ມີຂັ້ນໄດໜີໄຟ, ຄວາມກວ້າງຂອງທາງຂຶ້ນ ຫຼື ຂັ້ນໄດຕ້ອງບໍ່ຫຼຸດ 1.5 ມ ແລະ ອາຄານຮຽນສູງສຸດບໍ່ໃຫ້ເກີນ 5 ຊັ້ນ;
3. ຂະໜາດຂອງຫ້ອງຮຽນບໍ່ຫຼຸດ 7 ມ x 8 ມ, ລວງສູງຂອງຫ້ອງ 3 ມ-3.5 ມ ແລະ ບໍ່ໃຫ້ມີເສົາຢູ່ເຄິ່ງກາງຫ້ອງ; ມີປະຕູເຂົ້າ-ອອກ 2 ທາງ, ຂະໜາດບໍ່ໃຫ້ຫຼຸດ 0.8 ມ x 2 ມ;
4. ການອອກແບບກໍ່ສ້າງອາຄານ ຕ້ອງໄດ້ຜ່ານຂະແໜງກໍ່ສ້າງພື້ນຖານ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ພະແນກກໍ່ສ້າງພື້ນຖານ ກົມການເງິນ ກະຊວງສຶກສາທິການ ແລະ ກິລາ ພິຈາລະນາອະນຸມັດຮູບແບບ ແລະ ລາຍການ ແຕ່ຕ້ອງໄດ້ຮັບອະນຸຍາດການກໍ່ສ້າງຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນ ແລ້ວລາຍງານໃຫ້ ກົມອະນຸບານ ແລະ ປະຖົມສຶກສາ ຫຼື ກົມມັດທະຍົມສຶກສາ ຮັບຊາບ.

ມາດຕາ 8. ອັດຕາສ່ວນການບັນຈຸນັກຮຽນຕໍ່ຫ້ອງຮຽນ

1. ລະດັບການສຶກສາກ່ອນໄວຮຽນ ບໍ່ໃຫ້ເກີນ 25 ຄົນ ຕໍ່ ຫ້ອງ;
2. ລະດັບປະຖົມສຶກສາ ບໍ່ໃຫ້ເກີນ 34 ຄົນ ຕໍ່ ຫ້ອງ;
3. ລະດັບຊັ້ນມັດທະຍົມສຶກສາ ບໍ່ໃຫ້ເກີນ 30 ຄົນ ຕໍ່ ຫ້ອງ.

## ໝວດທີ 3
## ການຂໍອະນຸມັດສ້າງຕັ້ງ

ມາດຕາ 9. ປະເພດສະຖານການສຶກສາທີ່ອະນຸມັດໃຫ້ສ້າງຕັ້ງ

1. ສະຖານການສຶກສາກ່ອນໄວຮຽນ:
   1) ໂຮງລ້ຽງເດັກ;
   2) ໂຮງຮຽນອະນຸບານ;
   3) ໂຮງລ້ຽງເດັກ ແລະ ໂຮງຮຽນອະນຸບານ.
2. ສະຖານການສຶກສາສາມັນ:
   1) ໂຮງຮຽນປະຖົມສົມບູນ;
   2) ໂຮງຮຽນມັດທະຍົມຕອນຕົ້ນ;
   3) ໂຮງຮຽນມັດທະຍົມຕອນປາຍ;
   4) ໂຮງຮຽນມັດທະຍົມສົມບູນ.

ມາດຕາ 10. ການຂໍອະນຸມັດສ້າງຕັ້ງ

ກະຊວງສຶກສາທິການ ແລະ ກິລາ ໄດ້ກຳນົດເອກະສານເພື່ອຂໍອະນຸມັດສ້າງຕັ້ງໂຮງຮຽນ ດັ່ງນີ້:

1. ເອກະສານສຳລັບຜູ້ຂໍອະນຸມັດສ້າງຕັ້ງໂຮງຮຽນ;
2. ເອກະສານດ້ານວິຊາການ ແລະ ການຈັດຕັ້ງ;
3. ເອກະສານກ່ຽວກັບທີ່ດິນ ແລະ ອາຄານ.

ລາຍລະອຽດຂອງເອກະສານຕ່າງໆ ໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 11. ການຂໍອະນຸມັດຂະຫຍາຍສາຂາ**

ການຂໍອະນຸມັດສ້າງຕັ້ງໂຮງຮຽນສາຂາຢູ່ບັນດາແຂວງ, ນະຄອນຫຼວງ ແລະ ໃນຕົວເມືອງ ຕ້ອງປະກອບເອກະສານໃໝ່ຕາມ ມາດຕາ 10.

**ມາດຕາ 12. ການຂໍອະນຸຍາດດຳເນີນການເປີດໂຮງຮຽນ ແລະ ຂະຫຍາຍຊັ້ນຮຽນໃໝ່**

ການຂໍອະນຸຍາດດຳເນີນການເປີດໂຮງຮຽນ ແລະ ຂະຫຍາຍຊັ້ນຮຽນໃໝ່ ໃຫ້ຍື່ນຄຳຮ້ອງເຖິງກົມວິຊາການທີ່ກ່ຽວຂ້ອງ ຂອງກະຊວງສຶກສາທິການ ແລະ ກິລາ ໂດຍຜ່ານ ຫ້ອງການສຶກສາທິການ ແລະ ກິລາເມືອງ, ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ກ່ອນວັນເປີດສົກຮຽນຢ່າງໜ້ອຍ 90 ວັນ.

## ໝວດທີ 4
## ມາດຕະຖານຂອງຜູ້ໄດ້ຮັບອະນຸມັດສ້າງຕັ້ງໂຮງຮຽນ ແລະ ບຸກຄະລະກອນ

**ມາດຕາ 13. ຜູ້ໄດ້ຮັບອະນຸຍາດ (ເຈົ້າຂອງໂຄງການ).**

ຜູ້ໄດ້ຮັບອະນຸມັດ ຕ້ອງມີມາດຕະຖານດັ່ງນີ້:

1. ມີວຸດທິການສຶກສາໃນລະດັບໃດໜຶ່ງ; (ປະສົບການທາງດ້ານການບໍລິຫານ)
2. ເປັນຜູ້ທີ່ມີປະຫວັດຈະແຈ້ງ;
3. ມີຖານະທາງການເງິນທີ່ໄດ້ຮັບການຢັ້ງຢືນຈາກທະນາຄານ ໃນ ສປປ ລາວ.

**ມາດຕາ 14. ຜູ້ອຳນວຍການໂຮງຮຽນ.**

ຜູ້ອຳນວຍການໂຮງຮຽນ ຕ້ອງມີມາດຕະຖານດັ່ງນີ້:

1. ມີວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ໃນສາຂາບໍລິຫານ;
2. ມີປະສົບການທາງດ້ານການບໍລິຫານ ຢ່າງຕ່ຳ 3 ປີ;
3. ເປັນຜູ້ໄດ້ຮັບອະນຸມັດ ຫຼື ບຸກຄົນທີ່ຖືກແຕ່ງຕັ້ງຈາກຜູ້ໄດ້ຮັບອະນຸມັດ.

**ມາດຕາ 15. ຄະນະອຳນວຍການໂຮງຮຽນ.**

ຄະນະອຳນວຍການໂຮງຮຽນ ຕ້ອງມີມາດຕະຖານດັ່ງນີ້:

1. ເປັນຄົນລາວ, ຖືສັນຊາດລາວໜຶ່ງຄົນ ແລະ ຄົນຕ່າງປະເທດໜຶ່ງຄົນ;
2. ມີວຸດທິບັດຄູ ປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ;
3. ມີປະສົບການດ້ານການຄຸ້ມຄອງວິຊາການໃນໂຮງຮຽນ ຫຼື ເປັນຄູສອນມາກ່ອນຢ່າງໜ້ອຍ 5 ປີ;
4. ມີມາດຕະຖານອື່ນໆ ຕາມທີ່ກຳນົດໄວ້ ໃນຫຼັກການຄຸ້ມຄອງ ການສຶກສາກ່ອນໄວຮຽນ, ປະຖົມ ແລະ ມັດທະຍົມສຶກສາ.

ມາດຕາ 16. ມາດຕະຖານຂອງຄູ

ຄູຕ້ອງມີມາດຕະຖານດັ່ງນີ້:

1. ສະຖານການສຶກສາກ່ອນໄວຮຽນ:

ຕ້ອງມີວຸດທິບັດຄູອະນຸບານ ຊັ້ນສູງ ຫຼື ທຽບເທົ່າຂຶ້ນໄປ ມີປະກາສະນີຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະນຸຍາດການສອນ ແລະ ມີສຸຂະພາບແຂງແຮງດີ.

2. ສະຖານການສຶກສາສາມັນ:

1) ຄູທີ່ສອນຊັ້ນປະຖົມສຶກສາ

ຕ້ອງມີວຸດທິບັດຄູປະຖົມ ຊັ້ນສູງ ຫຼື ທຽບເທົ່າຂຶ້ນໄປ ມີປະກາສະນີຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະນຸຍາດການສອນ ແລະ ມີສຸຂະພາບແຂງແຮງດີ.

2) ຄູທີ່ສອນຊັ້ນມັດທະຍົມສຶກສາ

ຕ້ອງມີວຸດທິບັດຄູມັດທະຍົມ ປະລິນຍາຕີ ຫຼື ທຽບເທົ່າຂຶ້ນໄປ ມີປະກາສະນີຍະບັດ ຫຼື ໃບຢັ້ງຢືນວິຊາຄູ ຫຼື ໃບອະນຸຍາດການສອນ ແລະ ມີສຸຂະພາບດີ.

3. ຖ້າເປັນຄົນຕ່າງປະເທດ ຕ້ອງມີວຸດທິບັດຄູ ແລະ ໄດ້ຮັບການອະນຸຍາດໃນການສອນ ຈາກກະຊວງສຶກສາທິການແລະ ກິລາ.

ມາດຕາ17. ການມອບ-ໂອນກຳມະສິດ

ຜູ້ຮັບອະນຸຍາດສາມາດມອບ-ໂອນໂຮງຮຽນ ໃຫ້ແກ່ບຸກຄົນອື່ນໄດ້ ແຕ່ຕ້ອງໄດ້ຮັບອະນຸມັດເປັນທາງການຈາກ ກະຊວງສຶກສາທິການ ແລະ ກິລາ.

ມາດຕາ18. ການບໍລິຫານກິດຈະການຂອງໂຮງຮຽນ

ການບໍລິຫານກິດຈະການຂອງໂຮງຮຽນເອກະຊົນນານາຊາດ ນອກຈາກທີ່ໄດ້ລະບຸໄວ້ຂ້າງເທິງ ແມ່ນໃຫ້ປະຕິບັດຕາມລະບຽບການຕ່າງໆທີ່ ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

## ໝວດທີ 5

## ການນຳໃຊ້ຫຼັກສູດການສຶກສາ ແລະ ການອອກປະກາສະນີຍະບັດ

ມາດຕາ 19. ຫຼັກສູດການສຶກສາທີ່ນຳໃຊ້ຢູ່ໃນໂຮງຮຽນເອກະຊົນນານາຊາດ

ຫຼັກສູດການສຶກສາທີ່ນຳໃຊ້ຢູ່ໃນສະຖານການສຶກສາເອກະຊົນນານາຊາດ ທີ່ມີການລົງທຶນຈາກພາຍໃນ ແລະ ຕ່າງປະເທດ, ຕ້ອງຮັບປະກັນໃຫ້ນັກຮຽນໄດ້ຮຽນວິຊາພາສາລາວ, ປະຫວັດສາດລາວ ແລະ ສິລະປະວັດທະນະທຳຂອງຊາດລາວ. ເນື້ອໃນຫຼັກສູດບໍ່ສົ່ງຜົນກະທົບຕໍ່ຂົງເຂດປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ຕໍ່ວັດທະນະທຳ ຮີດຄອງປະເພນີ ແລະ ສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວ, ບໍ່ໂຄສະນາເຜີຍແຜ່ດ້ານສາສະໜາ ແລະ ບໍ່ປ່ຽນແປງເນື້ອໃນປະຫວັດສາດ.

ມາດຕາ 20. ການອະນຸມັດ ການນຳໃຊ້ຫຼັກສູດ

ການອະນຸມັດ ການນຳໃຊ້ຫຼັກສູດ ມີດັ່ງນີ້:

1. ຜູ່ຂໍອະນຸມັດສ້າງຕັ້ງໂຮງລ້ຽງເດັກ, ໂຮງຮຽນອະນຸບານ, ໂຮງຮຽນປະຖົມສົມບູນ, ໂຮງຮຽນມັດທະຍົມຕອນຕົ້ນ ແລະ ຕອນປາຍ ຕ້ອງສະເໜີຫຼັກສູດ ແລະ ໃບອະນຸມັດນຳໃຊ້ຫຼັກສູດຈາກເຈົ້າຂອງຫຼັກສູດ ເຖິງ ກົມອະນຸບານ ແລະ ປະຖົມສຶກສາ ຫຼື ກົມມັດທະຍົມສຶກສາ ເພື່ອສະເໜີຂໍອະນຸມັດຈາກ ກະຊວງສຶກສາທິການ ແລະ ກິລາ;
2. ຕ້ອງຈັດການຮຽນ-ການສອນ ວິຊາພາສາລາວ, ປະຫວັດສາດລາວ ແລະ ວັດທະນະທຳລາວ ໃຫ້ນັກຮຽນທຸກຊັ້ນຮຽນ ຄື:
   1) ຊັ້ນປະຖົມສຶກສາ: ກຳນົດໃຫ້ຮຽນພາສາລາວ ແລະ ວັດທະນະທຳລາວ 2 ຊົ່ວໂມງ/ອາທິດ;
   2) ຊັ້ນມັດທະຍົມສຶກສາ: ກຳນົດໃຫ້ຮຽນ ພາສາລາວ-ວັນນະຄະດີ, ປະຫວັດສາດລາວ ແລະ ວັດທະນະທຳລາວ 4 ຊົ່ວໂມງ/ອາທິດ (ຕາຕະລາງຮຽນຈະກຳນົດໄວ້ຕ່າງຫາກ).

ມາດຕາ 21. ການເລື່ອນຊັ້ນ ແລະ ສອບເສັງຈົບຊັ້ນ

ການເລື່ອນຊັ້ນ ແລະ ສອບເສັງຈົບຊັ້ນ ໃຫ້ປະຕິບັດ ດັ່ງນີ້:

1. ການເລື່ອນຊັ້ນຮຽນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານຂອງຫຼັກສູດນານາຊາດ ທີ່ໄດ້ອະນຸມັດໃຫ້ນຳໃຊ້;
2. ການສອບເສັງຈົບຊັ້ນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານຂອງຫຼັກສູດນານາຊາດທີ່ໄດ້ອະນຸມັດ ໃຫ້ນຳໃຊ້ ແຕ່ຕ້ອງມີວິຊາການທີ່ກ່ຽວຂ້ອງຈາກ ກະຊວງສຶກສາທິການ ແລະ ກິລາ ເຂົ້າເປັນຄະນະກຳມະການຮ່ວມ;
3. ພາຍຫຼັງການເລື່ອນຊັ້ນ ແລະ ຈັດຕັ້ງສອບເສັງຈົບຊັ້ນສຳເລັດແລ້ວ ຕ້ອງສະຫຼຸບລາຍງານໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ກົມອະນຸບານ ແລະ ປະຖົມສຶກສາ ຫຼື ກົມມັດທະຍົມສຶກສາ ກະຊວງສຶກສາທິການ ແລະ ກິລາ ຮັບຊາບແຕ່ລະສົກຮຽນ;
4. ໂຮງຮຽນເອກະຊົນນານາຊາດທີ່ຈັດການຮຽນ-ການສອນ ໂດຍປະສົມປະສານກັບຫຼັກສູດແຫ່ງຊາດ ໃຫ້ປະຕິບັດການສອບເສັງຈົບຊັ້ນ ຕາມລະບຽບການທີ່ ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

ມາດຕາ 22. ການອອກປະກາສະນີຍະບັດ ແລະ ໃບຢັ້ງຢືນ

ການອອກປະກາສະນີຍະບັດ ແລະ ໃບຢັ້ງຢືນ ໃຫ້ປະຕິບັດ ດັ່ງນີ້:

1. ຜູ່ທີ່ສອບເສັງຜ່ານຫຼັກສູດນານາຊາດ ແມ່ນສະຖາບັນການສຶກສາສາກົນ ທີ່ເປັນເຈົ້າຂອງຫຼັກສູດອອກປະກາສະນີຍະບັດ;
2. ໂຮງຮຽນເປັນຜູ່ອອກໃບຢັ້ງຢືນການສຶກສາ ແລະ ຄະແນນຮຽນ;
3. ນັກຮຽນທີ່ເປັນຄົນຕ່າງປະເທດມີຈຸດປະສົງ ຍົກຍ້າຍບ່ອນຮຽນ ຫຼື ກັບຄືນປະເທດ ກົມກ່ຽວຂ້ອງຂອງ ກະຊວງສຶກສາທິການ ແລະ ກິລາ ອອກໃບຢັ້ງຢືນການສຶກສາໃຫ້ ຕາມການສະເໜີຂອງຜູ່ອຳນວຍການໂຮງຮຽນ;

4. ນັກຮຽນໂຮງຮຽນເອກະຊົນນານາຊາດ ທີ່ໄດ້ຮຽນຫຼັກສູດນານາຊາດ ແລະ ປະສົມປະສານຫຼັກສູດແຫ່ງຊາດ ສະເໜີຂໍສອບເສັງຈົບຊັ້ນເອົາປະກາສະນີຍະບັດລາວ ໃຫ້ປະຕິບັດຕາມລະບຽບການສອບເສັງ ຂອງກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

## ມາດຕາ 23. ການປະກັນຄຸນນະພາບການສຶກສາພາຍໃນສະຖານການສຶກສາ

ການປະກັນຄຸນນະພາບການສຶກສາພາຍໃນສະຖານການສຶກສາ ໃຫ້ປະຕິບັດ ດັ່ງນີ້:

1. ໂຮງຮຽນທຸກແຫ່ງ ຍົກເວັ້ນໂຮງຮຽນ ລະດັບການສຶກສາກ່ອນໄວຮຽນ ຕ້ອງສະໝັກເປັນສະມາຊິກຂອງອົງການຮັບຮອງມາດຕະຖານສາກົນ ພາຍໃນ 12 ເດືອນ ນັບຈາກວັນທີ່ໄດ້ຮັບໃບອະນຸຍາດຕັ້ງໂຮງຮຽນ ແລະ ເປີດດຳເນີນການ;
2. ໂຮງຮຽນທຸກແຫ່ງ ຕ້ອງໄດ້ຮັບຮອງມາດຕະຖານການສຶກສາ ຈາກສູນປະກັນຄຸນນະພາບການສຶກສາ ກະຊວງສຶກສາທິການ ແລະ ກິລາ ຕາມລະບຽບການ;
3. ໂຮງຮຽນເອກະຊົນນານາຊາດທຸກລະດັບ ການສຶກສາທຸກແຫ່ງຕ້ອງໄດ້ຮັບການຮັບຮອງມາດຕະຖານການສຶກສາຈາກສະຖາບັນຮັບຮອງມາດຕະຖານສາກົນ;
4. ໃນກໍລະນີ ທີ່ໂຮງຮຽນບໍ່ສາມາດດຳເນີນການຕາມຂັ້ນຕອນທີ່ລະບຸໄວ້ຂ້າງເທິງນັ້ນ ໃຫ້ຍື່ນຄຳຮ້ອງຂໍຂະຫຍາຍເວລາໄດ້ພຽງ 1 ປີ ຫາກໂຮງຮຽນຍັງບໍ່ສາມາດດຳເນີນການໃຫ້ສຳເລັດໄດ້ໃຫ້ໂຮງຮຽນຢຸດເຊົາຮັບນັກຮຽນ ແລະ ຢຸດຕິກິດຈະການພາຍໃນ 2 ປີ;
5. ໂຮງຮຽນຕ້ອງເຮັດບົດສະຫຼຸບລາຍງານການປະເມີນຜົນທາງດ້ານຄຸນນະພາບການສຶກສາຕາມມາດຕະຖານສາກົນ ແລະ ກະຊວງສຶກສາທິການ ແລະ ກິລາ ກຳນົດໄວ້.

# ໝວດທີ 6
# ການລົງທຶນຂອງເອກະຊົນ

## ມາດຕາ 24. ຮູບແບບການລົງທຶນ

ການລົງທຶນຂອງເອກະຊົນ ຈາກພາຍໃນ ແລະ ຕ່າງປະເທດໃນຂະແໜງການສຶກສາ ມີດັ່ງນີ້:

1. ການລົງທຶນຈາກພາຍໃນ ຫຼື ຕ່າງປະເທດ 100%;
2. ການລົງທຶນຮ່ວມລະຫວ່າງນັກລົງທຶນພາຍໃນ ແລະ ຕ່າງປະເທດ;
3. ການລົງທຶນຈາກພາຍໃນ ແລະ ຕ່າງປະເທດແມ່ນໄດ້ຮັບສິດເຄື່ອນໄຫວ ແລະ ດຳເນີນກິດຈະການຕາມກົດໝາຍການສຶກສາ ແລະ ກົດໝາຍທີ່ກ່ຽວຂ້ອງແຫ່ງ ສປປ ລາວ.

## ມາດຕາ 25. ໄລຍະເວລາໃນການດຳເນີນກິດຈະການ.

ກຳນົດເວລາໃນການດຳເນີນກິດຈະການຂອງສະຖານການສຶກສາທີ່ມີການລົງທຶນຈາກຕ່າງປະເທດແມ່ນບໍ່ເກີນ 50 ປີ ນັບແຕ່ມື້ສ້າງຕັ້ງ, ໃນກໍລະນີຈຳເປັນລັດຖະບານສາມາດອະນຸຍາດເພີ່ມໄລຍະເວລາຕື່ມບໍ່ເກີນ 20 ປີ.

## ມາດຕາ 26. ການລົງທຶນໃສ່ການກໍ່ສ້າງ

ສະຖານການສຶກສາທີ່ມີການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບການອະນຸມັດດຳເນີນກິດຈະການຢູ່ ສປປ ລາວ ແຕ່ 30 ປີຂຶ້ນໄປ ຕ້ອງມີແຜນການກໍ່ສ້າງໂຄງລ່າງພື້ນຖານຂອງ

ສະຖານການສຶກສາ ແລະ ຕ້ອງໄດ້ຮັບການເຫັນດີຈາກອົງການຄຸ້ມຄອງທີ່ດິນ ແລະ ເຮືອນຫຼວງຂັ້ນແຂວງ, ນະຄອນຫຼວງ.

ການມອບດິນ ຫຼື ໃຫ້ເຊົ່າດິນເພື່ອລົງທຶນປຸກສ້າງ ໄລຍະທຳອິດແມ່ນບໍ່ເກີນ 20 ປີ, ບັນດາອາຄານສະຖານທີ່ ທີ່ໃຊ້ດຳເນີນກິດຈະການເຫຼົ່ານີ້ ຕ້ອງມີສັນຍາໂດຍອີງຕາມຫຼັກການພື້ນຖານຂອງການໃຫ້ເຊົ່າເພື່ອເປີດດຳເນີນກິດຈະການ ແລະ ຕ້ອງຮັບປະກັນການລົງທຶນ, ການກໍ່ສ້າງຕາມກຳນົດເວລາຂອງໂຄງການ.

## ໝວດທີ 7
## ຄ່າທຳນຽມ

**ມາດຕາ 27. ຄ່າທຳນຽມການຮຽນ**

ຄ່າທຳນຽມການຮຽນແມ່ນ ຄ່າໃຊ້ຈ່າຍ ທີ່ໂຮງຮຽນເກັບຈາກຜູ່ປົກຄອງນັກຮຽນ ເພື່ອເປັນຄ່າລົງທະບຽນ ແລະ ຄ່າຮຽນ.

ນອກນັ້ນ ຍັງມີຄ່າໃຊ້ຈ່າຍທີ່ທາງໂຮງຮຽນເກັບຈາກຜູ່ປົກຄອງນັກຮຽນ ເພື່ອເປັນຄ່າຈັດກິດຈະກຳ ແລະ ຄ່າບໍລິການອື່ນໆ.

**ມາດຕາ 28. ການເກັບຄ່າທຳນຽມການຮຽນ**

ການເກັບຄ່າທຳນຽມການຮຽນ ໃຫ້ປະຕິບັດຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍການລົງທຶນ, ນະໂຍບາຍ ແລະ ລະບຽບການ ຂອງກະຊວງສຶກສາທິການ ແລະ ກິລາ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 29. ຂໍ້ຫ້າມສຳລັບຜູ້ໄດ້ຮັບອະນຸມັດ**

ຂໍ້ຫ້າມສຳລັບຜູ້ໄດ້ຮັບອະນຸມັດ ມີດັ່ງນີ້:

1. ຫ້າມຜູ້ຮັບອະນຸມັດກະທຳໃດໆໃນລັກສະນະເປັນຕົວແທນ ຫຼື ສາຂາຂອງສະຖາບັນ ຫຼື ສະຖານສຶກສາໃນຕ່າງປະເທດ ເວັ້ນແຕ່ໄດ້ຮັບອະນຸມັດ ເປັນໜັງສືທາງການຈາກກະຊວງສຶກສາທິການ ແລະ ກິລາ;
2. ຫ້າມຜູ້ຮັບອະນຸມັດໂຄສະນາ ຫຼື ໃຫ້ຜູ້ອື່ນໂຄສະນາ ຊວນເຊື່ອ ກິດຈະກຳຂອງໂຮງຮຽນໃນລັກສະນະໂອ້ອວດເກີນຄວາມຈິງ ຫຼື ໃນລັກສະນະທີ່ສະແດງວ່າ ໂຮງຮຽນຂອງຕົນເປັນຕົວແທນ ຫຼື ສາຂາຂອງສະຖາບັນ ຫຼື ສະຖານການສຶກສາໃນຕ່າງປະເທດ ທີ່ບໍ່ມີມູນຄວາມຈິງ;
3. ຫ້າມຜູ້ຮັບອະນຸມັດ ນຳໃຊ້ ຫຼື ໃຫ້ບຸກຄົນອື່ນ ນຳໃຊ້ ສະຖານທີ່ ຫຼື ບໍລິເວນໂຮງຮຽນ ຈັດການສອນ ຫຼື ຊຸມນຸມ ທີ່ຂັດກັບລະບຽບກົດໝາຍ ແລະ ເປັນໄພຕໍ່ຄວາມໝັ້ນຄົງຂອງຊາດ;
4. ຫ້າມມີພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 30. ຂໍ້ຫ້າມສຳລັບການສ້າງຕັ້ງໂຮງຮຽນ**

ຂໍ້ຫ້າມສຳລັບການສ້າງຕັ້ງໂຮງຮຽນ ມີດັ່ງນີ້:

1. ຫ້າມສ້າງຕັ້ງໂຮງຮຽນ ທີ່ມີຫຼາຍຊັ້ນຮຽນໃນສະຖານທີ່ດຽວກັນ, ຖ້າເປັນໂຮງຮຽນທີ່ມີເນື້ອທີ່ດິນຕອນດຽວກັນໃຫ້ເຮັດກຳແພງຂັ້ນ ແລະ ໃສ່ຊື່ໂຮງຮຽນຕາມ ມາດຕາ 9;
2. ຫ້າມເປີດການຮຽນ-ການສອນ ກ່ອນໄດ້ຮັບການອະນຸມັດສ້າງຕັ້ງ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 31. ຕາປະທັບ**

ໂຮງຮຽນເອກະຊົນນານາຊາດທຸກແຫ່ງ ມີຕາປະທັບເພື່ອຮັບໃຊ້ວຽກງານທາງລັດຖະການ.

**ມາດຕາ 32. ການເຜີຍແຜ່**

ກົມອະນຸບານ ແລະ ປະຖົມສຶກສາ, ກົມມັດທະຍົມສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ,ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນທົ່ວປະເທດ ຈັດຕັ້ງເຜີຍແຜ່ໃຫ້ຄູ-ອາຈານ, ນັກຮຽນ, ອຳນາດການປົກຄອງທ້ອງຖິ່ນ, ພໍ່ແມ່ຜູ້ປົກຄອງ ແລະ ສັງຄົມຮັບຊາບຢ່າງທົ່ວເຖິງ;

ໂຮງຮຽນເອກະຊົນນານາຊາດທຸກແຫ່ງນຳເອົາເນື້ອໃນຂອງຂໍ້ຕົກລົງສະບັບນີ້ໄປຜັນຂະຫຍາຍເຂົ້າໃນວຽກງານຕົວຈິງ.

**ມາດຕາ 33. ການຈັດຕັ້ງປະຕິບັດ**

ຫ້ອງການກະຊວງ, ບັນດາກົມ, ສູນ, ສະຖາບັນການສຶກສາ, ພະແນກສຶກສາທິການ ແລະ ກິລາແຂວງ,ນະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ພາກສ່ວນທີ່ມີໜ້າທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ.

**ມາດຕາ 34. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ຕົກລົງ ແລະ ລະບຽບຫຼັກການຕ່າງໆທີ່ອອກໃນເມື່ອກ່ອນ ເຊິ່ງຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ, ຍົກເວັ້ນໂຮງຮຽນເອກະຊົນນານາຊາດທີ່ໄດ້ຮັບອະນຸມັດກ່ອນຂໍ້ຕົກລົງສະບັບນີ້ ໃຫ້ດຳເນີນໄປຈົນກວ່າໝົດອາຍຸອະນຸມັດ.

ລ. ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ບໍ່ນສົ່ງ:
1. ຫ້ອງການ, ບັນດາກົມ, ສະຖາບັນ, ສູນທີ່ຂຶ້ນກັບ ບ່ອນລະ 1 ສະບັບ
2. ພະແນກສຶກສາທິການແລະກິລານະຄອນຫຼວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ, ບ່ອນລະ 1 ສະບັບ
3. ໂຮງຮຽນມັດທະຍົມທຸກແຫ່ງ ທັງພາກລັດ ແລະ ເອກະຊົນນານາຊາດ, ບ່ອນລະ 1 ສະບັບ
4. ເກັບມ້ຽນ 4 ສະບັບ

ປ. ແສງເດືອນ ຫຼ້າຈັນທະບູນ